## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 7 ມິຖຸນາ 2020 (06-07-2020)

---

### ພື້ນຖານສໍາລັບຄວາມຫວັງຂອງພວກເຮົາ.

| ເມື່ອໃດທີ່ທ່ານໄດ້ມີຄວາມດີໃຈທີ່ທ່ານບໍ່ຍອມແພ້ (ຍົກເລີກ)? |
|---|

**ຈຸດສໍາຄັນໃນບົດຮຽນ:** ຄວາມຫວັງໃນອົງພຣະຄຣິດເທົ່ານັ້ນແມ່ນການແນ່ໃຈແລະແນ່ນອນ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຟລໍເຣັນ ແຈສ໌ວິກ ເຄີຍເປັນແຊມປ້ຽນແຫ່ງການລອຍນໍ້າລະຍະໄກ. ນາງໄດ້ລອຍນໍ້າລະຍະ 21 ໄມລ໌ຜ່ານຊອ່ງແຄບອັງກິດໃນປີ ຄ.ສ.1950, ແລະນາງໄດ້ເຮັດສໍາເລັດໄວກວ່ານັກລອຍນໍ້າຍິງໃນປວັດສາດ.

ໃນປີ ຄ.ສ. 1952 ນາງໄດ້ຕັ້ງໃຈແນໃສ່ເປົ້າໝາຍທີ່ສູງກວ່ານັ້ນອີກ: ລະຍະທາງ 26ໄມລ໌ລະຫວ່າງເກາະກາຕາລີນາແລະແຜ່ນດິນໃຫຍ່ຂອງຣັສຄາລີຟໍເນັຽ. ຜ່ານການຣົ່ວໄຫຼຂອງນໍ້າມັນ, ປວດຮາກ, ແລະຄວາມເມື່ອຍລ້າທີ່ສຸດ, ນາງໄດ້ລອຍເປັນລະຍະ 15 ຊົ່ວໂມງ. ມີໝອກໜາປົກຫຸ້ມຢູ່ຕາມຊາຍຝັ່ງ, ອຸນຫະພູມເລີ່ມປ່ຽນແປງ, ແລະການຫັນໃຈຂອງນາງກາຍເປັນພາລະໜັກ. ຍ້ອນວ່ານາງບໍ່ສາມາດເບິ່ງເຫັນຝັ່ງໄດ້, ນາງຢ້ານວ່ານາງຈະລອຍວົນໄປວຽນມາແລະສູນເສັຽຄວາມຫວັງ. ນັກກິລາທີ່ມີຄວາມຊໍານານຄົນນີ້ ໄດ້ເຮັດສິ່ງທີ່ນາງບໍ່ເຄີຍທໍາມາກອ່ນ: ນາງຕັດສິນໃຈຍົກເລີກແລະໄດ້ຮ້ອງຂໍຄວາມຄວາມຊ່ວຍເຫຼືອໃຫ້ດຶງນາງອອກຈາກນໍ້າຂຶ້ນມາເທິງຝັ່ງ. ນາງມາຮູ້ພາຍຫຼັງວ່ານາງໄກຈາກຫຼັກຊັຍ<u>ພຽງແຕ່ເຄິ່ງໄມລ໌ເທົ່ານັ້ນ</u>.

ດັ່ງດຽວກັບ ນາງຟລໍເຣັນ ແຈສ໌ວິກ, ພວກເຮົາເໝືອນກັນສາມາດສູນເສັຽຄວາມຫວັງ. ແຕ່ອັຄສາວົກເປໂຕໄດ້ຊີ້ທາງສູ່ຄວາມຫວັງອັນແນ່ນອນຊຶ່ງພວກເຮົາມີໃນອົງພຣະຄຣິດ. ພວກເຮົາອາດຈະອ່ອນເພັຽແລະທໍ້ແທ້ໃຈ, ແຕ່ວ່າຊັຍຊະນະນັ້ນຢູ່ໃກ້ເກີນກວ່າທີ່ພວກເຮົາຄາດຄິດໄວ້. <u>**ມັນເປັນເພາະຄວາມຫວັງຂອງພວກເຮົາໃນອົງພຣະຄຣິດ**</u>.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

### ການສຶກສາພຣະຄັມພີ

### 1. <u>1 ເປໂຕ 1:1-3</u>

*1 ເປໂຕ: ອັຄສາວົກຂອງພຣະເຢຊູຄຣິດ ຮຽນ: ພວກທີ່ຖືກຊົງເລືອກໄວ້ແລະທີ່ກະຈັດກະຈາຍໄປເປັນຜູ້ພັກເຊົາໃນ*
*ແຂວງປົນໂຕ, ແຂວງຄາລາເຕັຽ, ແຂວງກາປາໂດເກັຽ, ແຂວງອາເຊັຽແລະແຂວງບີທີເນັຽ. 2 ຄືຜູ້ທີ່ພຣະເຈົ້າພຣະ*
*ບິດາໄດ້ຊົງເລືອກໄວ້ແລ້ວຕາມທີ່ພຣະອົງໄດ້ຊົງຮູ້ລ່ວງໜ້າໄວ້ກ່ອນ ເພື່ອພຣະວິນຍານຈະຊົງຊໍາຣະໃຫ້ບໍຣິສຸດ,*
*ຈະໃຫ້ນົບນ້ອມເຊື່ອຟັງພຣະເຢຊູຄຣິດ, ແລະຈະໃຫ້ຮັບການຊິດດ້ວຍພຣະໂລຫິດຂອງພຣະອົງ. ຂໍພຣະຄຸນແລະ*
*ສັນຕິສຸກຈົ່ງບັງເກີດທະວີຄູນແກ່ທ່ານທັງຫລາຍເທີນ. 3 ສາທຸການແດ່ພຣະເຈົ້າພຣະບິດາແຫ່ງພຣະເຢຊູຄຣິດເຈົ້າ*
*ຂອງເຮົາທັງຫຼາຍ, ຜູ້ໄດ້ຊົງພຣະມະຫາກະຣຸນາແກ່ພວກເຮົາ, ຊົງໂຜດໃຫ້ພວກເຮົາບັງເກີດໃໝ່ເຂົ້າສູ່ຄວາມຫວັງ*
*ໃຈອັນມີຊີວິດຢູ່ ໂດຍການຄືນພຣະຊົນຂອງພຣະເຢຊູຄຣິດ.*

ອັຄສາວົກເປໂຕໄດ້ກາຍມາເປັນນຶ່ງໃນກຸ່ມຜູ້ນໍາທີ່ສໍາຄັນໃນຄຣິສຕະຈັກ ຫຼັງຈາກອົງພຣະເຢຊູໄດ້ຊົງສິ້ນພຣະຊົນ, ຊົງຄືນພຣະຊົນ, ແລະຊົງສະເດັດຂຶ້ນສູ່ສວັນ. ພັນທະກິຈຕົ້ນຕໍຂອງເພິ່ນແມ່ນປະກາດຂ່າວປະເສີດແກ່ຊາວຢິວ (ຄລຕ 2:7-8), ແລະອົງພຣະເຢຊູຊົງໄດ້ຊົງບັນຊາໃຫ້ເພິ່ນລ້ຽງຝູງແກະດ້ວຍການໃຫ້ອາຫານແລະບໍາລຸງລ້ຽງພວກ

ເຂົາ (ຢຮ 21:15-17). ເປໂຕແມ່ນນຶ່ງໃນສິບສອງອັຄສາວົກຂອງອົງພຣະເຢຊູ, ໝາຍເຖິງການທີ່ເພິ່ນໄດ້ຖືກມອບສິດອຳນາດເຕັມສ່ວນໃຫ້ອອກໄປປ່າວປະກາດຂ່າວປະເສີດແລະຄຳສອນຂອງພຣະຣາຊອານາຈັກຂອງພຣະເຈົ້າ. ຈົດໝາຍຂອງທ່ານເປໂຕສະທ້ອນໃຫ້ເຫັນເຖິງການດູແລເອົາໃຈໃສ່ຝູງແກະຂອງພຣະເຈົ້າ. ເປໂຕໄດ້ຮັກຝູງຄົນທີ່ຕິດຕາມອົງພຣະເຢຊູແລະໄດ້ຂຽນຈົດໝາຍໄປເພື່ອໜູນໃຈພວກເພິ່ນບໍ່ໃຫ້ຍົກເລີກ, ເສັຽຄວາມຫວັງ, ຫຼືອ່ອນເພັຽ.

| ແມ່ນຫຍັງຄືຄວາມແຕກຕ່າງລະຫວ່າງ <u>ຄວາມຫວັງທີ່ມີຊີວິດ</u> ແລະ ແຫຼ່ງອື່ນໆຂອງຄວາມຫວັງ? |
| --- |

ສະນັ້ນເປັນຫຍັງຄົນເຫຼົ່ານີ້ຈຶ່ງຕ້ອງການຄວາມຫວັງ? ຂໍ້ພຣະຄຳທີ່ກຳລັງເປີດເຫຼົ່ານີ້ບອກພວກເຮົາວ່າ, ພວກເຂົາເຈົ້າດຳລົງຊີວິດເປັນຄົນຕ່າງຊາດ, ຖືກກະແຈກກະຈາຍໄປທົ່ວອານາຈັກໂຣມັນໃນເຂດອາເຊັຽນ້ອຍ (ຊຶ່ງເປັນປະເທດ ຕຸລະກີໃນປັດຈຸບັນນີ້). ການອົບພະຍົບມັກຈະເປັນຮູບແບບການລົງໂທດ, ແຕ່ມັນບໍ່ແມ່ນແນວນັ້ນສຳລັບຜູ້ທີ່ເຊື່ອເຫຼົ່ານີ້. ພວກເຂົາເຈົ້າເປັນຄົນຕ່າງຊາດແລະຄົນແປກໜ້າເພາະວ່າໂລກນີ້ບໍ່ແມ່ນບ້ານຂອງພວກເຂົາເຈົ້າ. ສຳລັບພວກເຮົາທຸກຄົນຊຶ່ງໄດ້ວາງຄວາມຫວັງໃນອົງພຣະຄຣິດ, ໂລກມະນຸດນີ້ບໍ່ແມ່ນບ້ານອັນຖາວອນຂອງພວກເຮົາ. ພວກເຮົາດຳເນີນຊີວິດຢູ່ໃນໂລກນີ້ເໝືອນຄົນຕ່າງດ້າວທ້າວຕ່າງແດນແລະອົບພະຍົບເພາະ "ພົລເມືອງ (ສັນຊາດ) ຂອງເຮົາຢູ່ໃນສວັນ" (ຟລປ 3:20). ພວກເຮົາອາສັຍຢູ່ໃນໂລກນີ້ພຽງຊົ່ວຄາວ, ແຕ່ພວກເຮົາເປັນຊາວສວັນ, ພວກເຮົາພວມມຸ່ງໜ້າສູ່ໂລກທີ່ດີກວ່າໜ່ວຍໂລກທີ່ພວກເຮົາຮູ້ຢູ່ໃນຂນະນີ້. ໃນຂນະທີ່ພວກເຮົາອ່ານພຣະຄັມພີ 1 ເປໂຕ, ພວກເຮົາເຫັນຢ່າງແຈ່ມແຈ້ງວ່າຜູ້ທີ່ເຊື່ອເຫຼົ່ານີ້ກຳລັງຜະເຊີນໜ້າກັບຝ່າຍຕໍ່ຕ້ານແລະຄວາມທຸກທໍຣະມານ. ທ່ານເປໂຕຮັບຮູ້ວ່າການຂັດຄ້ານຈະສືບຕໍ່ຮຸນແຮງຂຶ້ນ (1 ເປໂຕ 4:12), ແລະທ່ານຕ້ອງການໃຫ້ຊາຍແລະຍິງເຫຼົ່ານີ້ຕຽມພ້ອມ, ຍຶດໝັ້ນໃນຄວາມຫວັງຂອງພວກເຂົາເຈົ້າໃນພຣະຄຣິດ.

ໃນແງ່ຂອງການທົດລອງເຫຼົ່ານີ້, ຜູ້ທີ່ເຊື່ອບາງຄົນອາດສົງສັຍວ່າພວກເຂົາຫຼຸດພົ້ນຈາກພຣະມະຫາກະຣຸນາທິຄຸນຂອງພຣະເຈົ້າຫລືບໍ່? ການດຳເນີນຊີວິດຕາມຮອຍພຣະບາດຂອງອົງພຣະຄຣິດຈະຄຸ້ມຄ່າຫຼືບໍ? ສົມຄວນຫຼືທີ່ຈະອົດທົນຕໍ່ໄປທ່າມກາງຄວາມຫຍຸ້ງຍາກແລະຂັດແຍ່ງເຫຼົ່ານີ້? ເປໂຕໄດ້ເຕືອນພວກເຂົາກ່ຽວກັບເອກະລັກຂອງພວກເຂົາ: *<u>ພຣະເຈົ້າໄດ້ເລືອກພວກເຂົາ</u>*. ບໍ່ມີຫຍັງກ່ຽວກັບຄວາມລອດພົ້ນແລະຊີວິດຂອງພວກເຂົາໃນພຣະຄຣິດທີ່ ອີງໃສ່ການລິເລີ່ມຂອງພວກເຂົາເອງ. ພວກເຂົາໄດ້ຮັບການຊົງເລືອກຈາກພຣະບິດາແລະໄດ້ມີປະສົບການ "ທີ່ພຣະເຈົ້າພຣະບິດາໄດ້ຊົງເລືອກໄວ້ແລ້ວຕາມທີ່ພຣະອົງໄດ້ຊົງຮູ້ລ່ວງໜ້າໄວ້ກ່ອນເພື່ອພຣະວິນຍານຈະຊົງຊຳຣະໃຫ້ບໍຣິສຸດ" (ຂໍ້ 2). ຈາກນັ້ນ, ເປໂຕໄດ້ຫັນຄວາມສົນໃຈໄປຫານຶ່ງຂອງເນື້ອໃນໃຈຄວາມຂອງການຂຽນນີ້. ນັ້ນຄື: **<u>ຄວາມຫວັງ.</u>**

## 2. <u>1 ເປໂຕ 1:4-5</u>

*4 ເພື່ອໃຫ້ໄດ້ຮັບມໍຣະດົກຊຶ່ງບໍ່ຮູ້ເປື່ອຍເນົ່າ, ບໍ່ຖືກຊົ່ວມົວໝອງ, ແລະຫ່ຽວແຫ້ງໄປບໍ່ໄດ້ຊຶ່ງໄດ້ຮັກສາໄວ້ໃນມະຫາສວັນເພື່ອທ່ານທັງຫລາຍ. 5 ຊຶ່ງເປັນຜູ້ທີ່ຣິດເດດຂອງພຣະເຈົ້າຊົງເຝົ້າຮັກສາໄວ້ດ້ວຍຄວາມເຊື່ອຈົນໄດ້ເຖິງຄວາມພົ້ນຊຶ່ງພ້ອມແລ້ວທີ່ຈະປາກົດໃນເວລາສຸດທ້າຍ.*

ຫຼັງຈາກໄດ້ຕັກເຕືອນຜູ້ອ່ານກ່ຽວກັບຕົວຕົນແລະຈຸດປະສົງຂອງພວກເຂົາ, ເປໂຕໄດ້ຍົກສູງລະດັບມຸມມອງຂອງພວກເຂົາ, ແລະໄດ້ເປີດຕາຂອງພວກເຂົາຂຶ້ນເພື່ອໃຫ້ເຫັນ<u>ຄວາມຫວັງທີ່ມີຊີວິດ</u>ຢູ່ນີ້ ຊຶ່ງຖືກເກັບຮັກສາໄວ້ໃນສວັນ. *<u>ຄວາມຫວັງ</u>*ຂອງພວກເຮົາແມ່ນປອດພັຍຊົ່ວນິຣັນ. ບໍ່ມີສິ່ງໃດສາມາດຫລຸດຜ່ອນມັນ, ເຮັດໃຫ້ມັນເນົ່າເປື່ອຍ, ທັນເຫປ່ຽນມັນ, ຫລື ທຳລາຍມັນ. ອົງພຣະຜູ້ເປັນເຈົ້າເອງຊົງເປັນມໍຣະດົກຂອງພວກເຮົາ. <u>ພຣະອົງເປັນພຣະຄຳທີ່ມີຊີວິດ</u>

ແລະເປັນຄວາມຫວັງທີ່ມີຊີວິດຂອງພວກເຮົາ. ມໍຣະດົກຂອງພວກເຮົາໄດ້ຖືກສງວນໄວ້ໃນສວັນ. ເປໂຕໄດ້ບັນລະຍາຍມູນມໍຣະດົກນີ້ດ້ວຍຄຸນນາມສາມຄຳທີ່ມີຄວາມໝາຍສົມບູນດັ່ງຕໍ່ລົງໄປນີ້:

- **ບໍ່ເປື່ອຍເນົ່າ (ບໍ່ດັບສູນ).** ມໍຣະດົກຂອງພວກເຮົາໃນພຣະຄຣິດບໍ່ສາມາດຖືກທຳລາຍໄດ້ຈາກພາຍໃນຫຼືພາຍນອກ. ບໍ່ມີຜູ້ໃດຈະສາມາດຍາດແຍ່ງເອົາມູນມໍຣະດົກນີ້ໄປຈາກພວກເຮົາ, ແລະບໍ່ມີຫຍັງຈະສາມາດແຍກພວກເຮົາອອກຈາກມູນມໍຣະດົກນີ້.
- **ບໍ່ດ່າງພ້ອຍ (ບໍ່ຖືກຊົ່ວມົວໝອງ).** ເຣື່ອງນີ້ກ່ຽວຂ້ອງກັບຄວາມບໍຣິສຸດຂອງມໍຣະດົກຂອງພວກເຮົາ. ມໍຣະດົກຂອງພວກເຮົາແມ່ນທົນທານຕໍ່ໄຟໄດ້ໃນທຸກໆດ້ານ. ມັນບໍຣິສຸດຢ່າງສົມບູນແລະທັງໝົດເລີຍ.
- **ບໍ່ຫ່ຽວແຫ້ງ (ບໍ່ຕົກສີ).** ມໍຣະດົກຂອງພວກເຮົາຈະບໍ່ເສື່ອມເສັຽຣັສມີແລະກຽດຕິຍົດຂອງມັນຈັກເທື່ອ. ຊັບສົມບັດອື່ນໆອາດຈະສູນເສັຽຮູບຮ່າງລັກສະນະຫຼືຄຸນຄ່າຕາມວັນເວລາຜ່ານໄປ. ແຕ່ມໍຣະດົກຂອງພວກເຮົາໃນອົງພຣະຄຣິດຈະບໍ່ອັບເສົາ, ບໍ່ເສື່ອມເສັຽຣັສມີ, ບໍ່ຖືກທຳລາຍ, ແລະບໍ່ຈືດຈາງຫຼືເບື່ອໜ່າຍຈັກເທື່ອ.

ຄວາມຫວັງຂອງພວກເຮົາຖືກຜູກມັດກັບການຊົງຄືນພຣະຊົນຂອງອົງພຣະຄຣິດ ແລະຄວາມປອດພັຍຂອງພວກເຮົາຖືກຜູກມັດກັບພຣະອຳນາດຂອງພຣະເຈົ້າ.

| |
|---|
| ຄຳບັນລະຍາຍຂອງເປໂຕກ່ຽວກັບມໍຣະດົກ ໃຫ້ຄວາມຫວັງແກ່ພວກເຮົາໃນສມັຍປັດຈຸບັນຢ່າງໃດ? |

## 3.1 ເປໂຕ 1:6-9

*[6] ໃນສິ່ງນີ້ແຫລະ, ຈົ່ງຊົມຊື່ນຍິນດີຫລາຍເຖິງແມ່ນວ່າດຽວນີ້ຈຳເປັນທີ່ພວກທ່ານຈະຕ້ອງທົນຄວາມທຸກໂສກດ້ວຍການຖືກທົດລອງຕ່າງໆໃນຊົ່ວເວລານຶ່ງ. [7] ເຖິງແມ່ນວ່າຄຳກໍຍັງຖືກລອງເບິ່ງດ້ວຍໄຟແຕ່ຄວາມເຊື່ອທີ່ຖືກລອງກໍປະເສີດກວ່າຄຳທີ່ຍ່ອມຮູ້ສູນຫາຍໄປ. ດັ່ງນັ້ນການທົດລອງຕ່າງໆກໍເກີດຂຶ້ນເພື່ອໃຫ້ຄວາມເຊື່ອທີ່ລອງແລ້ວນັ້ນປາກົດວ່າຄວນຮັບຄວາມສັຣເສີນ, ສະງ່າຣາສີ, ແລະກຽດຕິຍົດໃນເວລາທີ່ພຣະເຢຊູຄຣິດຈະສະເດັດມາປາກົດ. [8] ພຣະອົງຜູ້ທີ່ທ່ານຍັງບໍ່ໄດ້ເຫັນແຕ່ພວກທ່ານກໍຍັງຮັກພຣະອົງຢູ່ເຖິງແມ່ນວ່າຂນະນີ້ພວກທ່ານບໍ່ເຫັນພຣະອົງແຕ່ຍັງເຊື່ອແລະຊື່ນຊົມຍິນດີດ້ວຍຄວາມຍິນດີອັນຮຸ່ງເຮືອງຊຶ່ງເຫລືອທີ່ຈະອະທິບາຍໄດ້. [9] ແລ້ວທ່ານທັງຫລາຍຈຶ່ງໄດ້ຮັບຕາມຈຸດປະສົງແຫ່ງຄວາມເຊື່ອຂອງພວກທ່ານຄືວິນຍານຈິດຂອງພວກທ່ານຈະໄດ້ລອດພົ້ນ.*

ຄວາມຫວັງຂອງພວກເຮົາໃນພຣະຄຣິດສະແດງອອກໃນຄວາມເຊື່ອຂອງພວກເຮົາ. ຄວາມເຊື່ອແລະຄວາມຫວັງມີຄວາມເຊື່ອມໂຍງຕິດຕໍ່ພົວພັນກັນ. ສຳລັບບັນດາຜູ້ທີ່ເຊື່ອທີ່ເປໂຕໄດ້ເວົ້າເຖິງ, ຄວາມເຊື່ອຂອງພວກເພິ່ນຂນະນັ້ນໄດ້ຊ່ວຍພວກເພິ່ນໃຫ້ມີຄວາມມານະອົດທົນ. ຈາກຄວາມທຸກທໍຣະມານທີ່ພວກເຂົາເຈົ້າໄດ້ຜະເຊີນໜ້າແລະຄວາມເຊື່ອຂອງພວກເພິ່ນໃນອະນາຄົດ. ນີ້ໝາຍເຖິງຄວາມຫວັງຂອງພວກເພິ່ນທີ່ຮັກສາໄວ້ໃຫ້ຈິດໃຈຂອງເພິ່ນແນໃສ່ບ່ອນທີ່ອົງພຣະເຢຊູໄດ້ຊົງປະທັບຢູ່ເບື້ອງບົນສວັນ, ດ້ວຍມູນມໍຣະດົກອັນຕລອດໄປເປັນນິດສຳລັບໄພ່ພົນຂອງພຣະອົງ.

| |
|---|
| **ແມ່ນຫຍັງຄືພົນປໂຍດຂອງການດຳເນີນຊີວິດດ້ວຍຄວາມຫວັງຊຶ່ງຖືກວາງຮາກຖານໄວ້ໃນອົງພຣະຄຣິດ?** |

ອີງຕາມພຣະອຳນາດຂອງພຣະເຈົ້າແລະມໍຣະດົກຂອງພວກເຮົາ, ບັນດາຜູ້ຊອບທັມສາມາດມີຄວາມຊື່ນຊົມຍິນດີແມ້ແຕ່ຢູ່ໃນທ່າມກາງການທົດລອງຕ່າງໆນາໆທີ່ພວກເຮົາກຳລັງຜະເຊີນໜ້າຢູ່ດຽວນີ້. ຢູ່ໃນພຣະຄຳວັກນີ້, ພວກເຮົາເຫັນ ຫ້າລັກສນະຂອງການທົດລອງໃນຊີວິດຂອງພວກເຮົາ ດັ່ງຕໍ່ລົງໄປນີ້:

1. **ການທົດລອງແຕກຕ່າງຕາມສະພາບ.** ("ການທົດລອງຕ່າງໆ") ການທົດລອງມາໃນທຸກຮູບຮ່າງແລະຂນາດ.
2. **ການທົດລອງເປັນສິ່ງຊົ່ວຄາວ.** ("ເຖິງແມ່ນວ່າຂະນະນີ້ເປັນພຽງເວລາສັ້ນໆ") ພຣະເຈົ້າຊົງອະນຸຍາດໃຫ້ພວກເຮົາຜ່ານ "ເຕົາໄຟຫຼືແປວໄຟ", ແຕ່ພຣະອົງຊົງເປັນຜູ້ກັ່ນກອງ ພຣະອົງຊົງຄວບຄຸມຄວາມຮ້ອນນັ້ນ.
3. **ການທົດລອງນັ້ນຍຸ່ງຍາກ.** ("ທ່ານທົນທຸກທໍຣະມານ") ປະໂຍກນີ້ນຳມາຊຶ່ງແນວຄວາມຄິດຂອງຄວາມ<u>ໜັກໜ່ວງ</u>. ຄຳກິຣິຍານີ້ມີຄວາມໝາຍເຖິງການປະສົບການກ່ຽວກັບ ຄວາມເຈັບປວດ, ຄວາມໂສກເສົ້າ, ແລະຄວາມທຸກ (ຄວາມຫຍຸ້ງຍາກລຳບາກ: ກາຍ, ວາຈາ, ແລະຈິດໃຈ).
4. **ການທົດລອງມີວັດຖຸປະສົງ** ("ນິສັຍໃຈຄໍທີ່ພິສູດແລ້ວໃນຄວາມເຊື່ອຂອງທ່ານ") ຊາວຄຣິສຕຽນໄດ້ຖືກຕອງຖືກກັ່ນກອງໂດຍພຣະເຈົ້າ ເພື່ອໃຫ້ເປັນແສງສະທ້ອນຂອງພຣະຣັສມີຂອງພຣະອົງ. ວິທີການກັ່ນກອງຂອງພຣະເຈົ້າແມ່ນແນໃສ່ການກຳຈັດສິ່ງເຫຼົ່ານັ້ນທີ່ປ້ອງກັນ (<u>ເປັນອຸປສັກ</u>) ບໍ່ໃຫ້ພວກເຮົາກັບກາຍເປັນ<u>ເໝືອນອົງພຣະເຢຊູຄຣິດ</u>.
5. **ການທົດລອງສົມຄວນສົ່ງຜົນລັບໃຫ້ເກີດຄວາມປິຕິຍິນດີ** ("ອາດຈະສົ່ງຜົນໃຫ້ເກີດການສັຣເສີນ, ພຣະສງ່າຣາສີ, ແລະ ພຣະກຽດຕິຍົດ, ໃນການຊົງເປີດເຜີຍຂອງອົງພຣະເຢຊູຄຣິດເຈົ້າ") ໃນມື້ນຶ່ງພວກເຮົາຈະໄດ້ເຫັນອົງພຣະເຢຊູຄຣິດເຈົ້າ ແລະຮູ້ຈັກພຣະອົງຢ່າງເຕັມທີ່(ບໍຣິບູນ).

| |
|---|
| **ພຣະເຈົ້າໄດ້ຊົງໃຊ້ກຸ່ມພວກເຮົາ ໃນວິທີການກັ່ນກອງ ຂອງຊີວິດຂອງພວກເຮົາ ໂດຍວິທີໃດ?** |

## ນຳໃຊ້ໃນຊີວິດ:

ຈົ່ງຈົດຈຳອາທິດນີ້ວ່າພວກເຮົາມີ <u>ຄວາມຫວັງທີ່ມີຊີວິດ</u>. ຈົ່ງເລືອກເອົານຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ຈົ່ງຮັບຮູ້.** ຈົ່ງສາຣະພາບຕໍ່ພຣະເຈົ້າ ໃນມຸມໃດໃນຊີວິດຂອງທ່ານທີ່ທ່ານເສັຽຄວາມຫວັງ. ຈົ່ງສາຣະພາບບາບໃດໆ, ແລະທູນຂໍຕໍ່ພຣະອົງໃຫ້ຊົງເປີດຕາຂອງທ່ານໃຫ້ມອງເຫັນຄວາມຈິງແຫ່ງ<u>ຄວາມຫວັງທີ່ມີຊີວິດ</u>ໃນອົງພຣະເຢຊູຄຣິດເຈົ້າ.
- **ຈົ່ງຈົດຈຳ.** ຈົ່ງກັບໄປອ່ານ 1 ເປໂຕ 1:1-9, ແລະ ຈົດບັນທຶກວິທີການທີ່ເປໂຕໄດ້ບັນລະຍາຍກ່ຽວກັບຝູງຄົນທີ່ຕິດຕາມ ແລະ ເຊື່ອວາງໃຈໃນອົງພຣະຄຣິດ. ເກັບບັນຊີນີ້ໄວ້ໃນທີ່ປອດພັຍເພື່ອຈະໄດ້ເຕືອນທ່ານວ່າທ່ານແມ່ນຜູ້ໃດໃນອົງພຣະຄຣິດ?
- **ຈົ່ງຟື້ນຟູ.** ມີຜູ້ໃດຜູ້ນຶ່ງບໍ່ທີ່ມີຄວາມສິ້ນຫວັງທີ່ພຣະເຈົ້າໄດ້ຊົງນຳມາສູ່ຈິດໃຈຂອງທ່ານ? ຈົ່ງໃຊ້ເວລາພົບ ຫຼື ໂທຣະສັບຫາພວກເພິ່ນໃນອາທິດນີ້ ແລ້ວແບ່ງປັນຄວາມຈິງທີ່ພຣະເຈົ້າໄດ້ຊົງສຳແດງແກ່ທ່ານໃນບົດຮຽນນີ້.

ພວກເຮົາທຸກຄົນມີຍາມທີ່ພວກເຮົາມີຄວາມເມື່ອຍລ້າອ່ອນແຮງແລະຂາດກຳລັງໃຈ. ມັນແມ່ນຊ່ວງເວລານັ້ນລະທີ່ພວກເຮົາຕ້ອງຈົດຈຳວ່າພວກເຮົາມີ<u>ຄວາມຫວັງທີ່ມີຊີວິດ</u>ທີ່ຖືກຮັບປະກັນໂດຍອົງພຣະຄຣິດ. ນີ້ຈະເປັນພລັງໃຈ (ວິຕາມິນດ້ານຈິດວິນຍານ) ແກ່ພວກເຮົາໃນຂະນະທີ່ພວກເຮົາອົດທົນພາກພຽນພະຍາຍາມຈົນເຖິງທີ່ສຸດ.

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ http://lsbf.us ໂດຍSSK**